# ແຜນການລົງທຶນລາຍເດືອນ

# ແບບສະໝໍ່າສະເໝີ(ແບບປະຈໍາ)ຈະສາມາດສ້າງຜົນຕອບແທນສູງໄດ້

ມີຫຼາຍຄົນສົນໃຈວ່າມີເງິນໜ້ອຍແຕ່ຢາກລົງທຶນກັບຮຸ້ນຈະສາມາດລົງທຶນໄດ້ບໍ່? ເພາະບາງທ່ານກໍ່ບໍ່ກ້າຈະລົງທຶນດ້ວຍເງິນຈໍານວນຫຼາຍໃນຄັ້ງດຽວເພາະຢ້ານມີຄວາມສ່ຽງຍ້ອນປະສົບການໃນການລົງທຶນມີໜ້ອຍ ຫຼື ບາງທ່ານກໍເປັນພະນັກງານທີ່ກິນເງິນເດືອນແຕ່ຢາກລົງທຶນກັບຮຸ້ນເປັນແບບໄລຍະຍາວ. ໃນຫົວຂໍ້ນີ້ ຂ້າພະເຈົ້າໄດ້ນໍາເອົາບົດຮຽນຂອງປະເທດອື່ນມາສະເໜີວິທີຫຼືແຜນການລົງທຶນແບບລາຍເດືອນສະໝໍ່າສະເໝີ ເຊິ່ງການລົງທຶນແບບນີ້ສ່ວນຫຼາຍເປັນຮູບແບບການລົງທຶນໄລຍະຍາວຜູ້ທີ່ມີລາຍໄດ້ໜ້ອຍກໍ່ສາມາດລົງທຶນກັບຮຸ້ນໄດ້. ຜູ້ອ່ານກໍ່ຄົງຢາກຮູ້ວ່າແຜນການລົງທຶນດັ່ງກ່າວເປັນແນວໃດພວກເຮົາມາທໍາຄວາມຮູ້ຈັກນໍາກັນດັ່ງນີ້:

## ການລົງທຶນແບບລາຍເດືອນແບບປະຈໍາສະໝໍ່າສະເໝີແມ່ນຫຍັງ?

ແຜນການລົງທຶນລາຍເດືອນແບບສະໝໍ່າສະເໝີເປັນການສ້າງລະບຽບວິໄນໃນການລົງທຶນໂດຍ ການລົງທຶນດ້ວຍຈໍານວນເງິນເທົ່າໆ ກັນເປັນປະຈໍາເພື່ອລົດຜ່ອນຄວາມຜັນແປຈາກການຂຶ້ນ ແລະລົງ ຂອງລາຄາຫຼັກຊັບເຊິ່ງໃນໄລຍະຍາວທ່ານຈະພົບວ່າຕົ້ນທຶນໃນການລົງທຶນຫຼຸດລົງ. ການລົງທຶນແບບປະຈໍາຄືການວາງແຜນທີ່ລົງໃນຈໍານວນເງິນທີ່ກໍານົດໄວ້ໃນກອງທຶນລວມ ທີ່ທ່ານໄດ້ເລືອກໄວ້ໂດຍສັດ ສ່ວນທີ່ເທົ່າກັນທຸກເດືອນ.

## ຂັ້ນຕອນການລົງທຶນແບບສະໝໍ່າສະເໝີ

ການລົງທຶນຢ່າງຍັ້ງຢືນຜ່ານແຜນການລົງທຶນລາຍເດືອນແບບສະໝໍ່າສະເໝີ ເຊິ່ງກົນໄກຂອງແຜນການລົງທຶນລາຍເດືອນແບບສະໝໍ່າສະເໝີມີ 3 ຂັ້ນຕອນດັ່ງນີ້:

ຂັ້ນຕອນ 1: ກໍານົດຈໍານວນເງິນສໍາລັບລົງທຶນທຸກເດືອນ

ຂັ້ນຕອນ 2: ເລືອກປະເພດການລົງທຶນທີ່ເໝາະສົມກັບຄວາມສ່ຽງທີ່ທ່ານຍອມຮັບໄດ້ ແລະຖືກກັບເປົ້າໝາຍທາງການເງິນຂອງຕົວເອງ

ຂັ້ນຕອນ 3: ຊື້ຮຸ້ນໃນທຸກໆເດືອນສະໝໍ່າສະເໝີ

## ຜົນປະໂຫຍດຈາກການລົງທຶນແບບປະຈໍາ

- ເພື່ອຄວາມສະບາຍໃຈຂອງທ່ານການລົງທຶນແບບລາຍເດືອນໂດຍອັດຕະໂນມັດຈະຊ່ວຍໃຫ້ທ່ານບັນລຸຈຸດປະສົງທາງການເງິນໃນໄລຍະຍາວ
- ສາມາດຈັດການກັບຈັງຫວະຂອງຕະຫຼາດ ແລະ ຫຼຸດຜ່ອນປັດໃຈທາງດ້ານອາລົມຈາກການຕັດສິນໃຈລົງທຶນຂອງທ່ານ
- ການລົງທຶນຢ່າງສະໝໍ່າສະເໝີ ແລະ ມີລະບຽບວິໄນນັ້ນຈະຊ່ວຍໃຫ້ທ່ານສາມາດໃຊ້ປະໂຫຍດຈາກໂອກາດທາງການຕະຫຼາດເມື່ອໃດກໍ່ຕາມທີ່ຕະຫຼາດມີລາຄາຂຶ້ນ.

## ກົນລະຍຸດການລົງທຶນແບບປະຈໍາ : ການສະເລ່ຍຕົ້ນທຶນ

ການລົງທຶນແບບປະຈຳລາຍເດືອນຈະຊ່ວຍໃຫ້ທ່ານໄດ້ຮັບຜົນປະໂຫຍດຈາກການສະເລ່ຍຕົ້ນທຶນແບບອັດຕະໂນມັດເຊິ່ງສະຖານະການລຸ່ມນີ້ໄດ້ສະແດງເຖິງພາບລວມຂອງການສະເລ່ຍຕົນທຶນໃນການລົງທຶນ.

ຕົວຢ່າງ ທີ່1:

1.1 **ລົງທຶນ ຄັ້ງດຽວ ໃນເດືອນ ມັງກອນ ດ້ວຍຈຳນວນເງິນ 12,000,000 ກີບ ພຽງ 1 ຄັ້ງ. ດ້ວຍການຊື້ຮຸ້ນທະນາຄານ BCEL**

| ເດືອນ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| ລາຄາຕໍ່ຮຸ້ນ | 7,500 | 7,000 | 7,000 | 6,900 | 6,700 | 6,300 | 6,050 | 6,100 | 5,750 | 5,700 | 5,700 | 5,150 | |
| ຈຳນວນທີ່ຊື້ | 1,600 | - | - | - | - | - | - | - | - | - | - | - | 1,600 |

* ລາຄາຕໍ່ຮຸ້ນ ແມ່ນເອົາລາຄາ ມື້ປິດຕະຫຼາດຂອງມື້ທຳອິດຂອງເດືອນເປັນລາຄາຊື້-ຂາຍ ( ລາຄາຕົວຈິງໃນປີ 2015 )

ຕົວຢ່າງທີ່ 2:

1.2 **ລົງທຶນແບບສະໝ່ຳສະເໝີ ເດືອນລະ 1,000,000 ກີບຕໍ່ເນື່ອງກັນ 12 ເດືອນ ລວມເປັນເງິນ 12,000,000 ກີບ**

| ເດືອນ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ລວມ |
|---|---|---|---|---|---|---|---|---|---|---|---|---|---|
| ລາຄາຕໍ່ຮຸ້ນ | 7500 | 7000 | 7000 | 6900 | 6700 | 6300 | 6050 | 6100 | 5750 | 5700 | 5700 | 5150 | |
| ຈຳນວນທີ່ຊື້ | 100 | 100 | 200 | 100 | 200 | 100 | 200 | 200 | 100 | 200 | 200 | 200 | 1,900 |

* ລາຄາຕໍ່ຮຸ້ນ ແມ່ນເອົາລາຄາ ມືປິດຕະຫຼາດຂອງມືທຳອິດຂອງເດືອນເປັນລາຄາຊື້-ຂາຍ (ປີ 2015)

ໝາຍເຫດ: ປະຈຸບັນແມ່ນ ຫົວໜ່ວຍໃນການຊື້-ຂາຍ ແມ່ນ ຫົວໜ່ວຍຖ້ວນຮ້ອຍ ດັ່ງນັ້ນບາງ ເດືອນຈຶ່ງ ຊື ໄດ້ 100 ຮຸ້ນສ່ວນເງິນທີເຫຼືອກໍນາໄປ ບວກັບເງິນທີ່ຄ້າງ ໄວ້ສາມາດຊື້ໄດ້ເພີ່ມເປັນ 200 ຮັ້ນໃນເດືອນຖັດໄປ . ພ້ອມເງິນທີ່ເຫຼືອ ຈຳນວນ 175,000 ກີບ

ຈາກຕົວຢ່າງ ເຫັນວ່າ ຖ້າຊື້ຮຸ້ນຄັ້ງດຽວ ດ້ວຍເງິນຈຳນວນ 12,000,000 ກີບ ຈະສາມາດຊື້ຮຸ້ນໄດ້ ຈຳນວນ 1,600 ຮຸ້ນ ແຕ່ຖ້າຊື້ແບບ ສະເລ່ຍຕົ້ນທຶນ ແບບສະໝ່ຳສະເໝີ ແມ່ນເຫັນວ່າ ໄດ້ຈຳນວນຮຸ້ນທີຫຼາຍກວ່າ 1,900 ຮຸ້ນ (ຫຼາຍກວ່າ 300 ຮຸ້ນ) ພ້ອມກັບເງິນເຫຼືອຈາກການຊື້-ຂາຍ ຈຳນວນ 175,000 ກີບ.

ເມື່ອພວກເຮົາຮູ້ທັງປະໂຫຍດຂັ້ນຕອນແບບນີ້ແລ້ວຂ້າພະເຈົ້າເຊື່ອວ່າຄົງເປັນອີກແບບແຜນວິທີການລົງທຶນ ໜຶ່ງທີ່ສາມາດຊ່ວຍທ່ານໃນການລົງທຶນໄລຍະຍາວໄດ້. ເພາະການລົງທຶນພຽງເລັກນ້ອຍໃນວັນນີ້ທ່ານອາດເປັນເສດຖີໃນວັນໜ້າ.

ແສງລາວີ ວົງສາວັນທອງ
ຮອງພະແນກ ນາຍໜ້າຊື້-ຂາຍຫຼັກຊັບ